ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 12:
## The Story of "Sinsay" (Con.)

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ
**ລະຫັດ:** 0907409
**ບົດທີ 4:** ໜັງສືເລື່ອງ: "ສິນໄຊ" (ຕໍ່) ເວລາ: 90 ນາທີ
**ຜູ້ບັນຍາຍ:** ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 2
**ສົກຮຽນ:** 2022-2023

| | |
|---|---|
| **ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)** | |
| **ສ້າງເປົ້າໝາຍ (Goals):**<br>ນັກຮຽນຈະຮູ້:<br>- ວິທີປະດິດແຕ່ງໜັງສືເລື່ອງ "ສິນໄຊ" | |
| **ຄວາມເຂົ້າໃຈ (Understand):**<br>ນັກຮຽນຈະເຂົ້າໃຈ:<br>- ໂຄງປະກອບຂອງໜັງສືເລື່ອງ<br>- ວິທີໃຊ້ສັບພາສາເຂົ້າໃນການປະພັນ<br>- ການອາດພາບ ແລະ ການພັນລະນາ<br>- ວິທີໃຊ້ຮູບການສິລະປະໄມ້ງັດ | **ຄຳຖາມຫຼັກ (Questions):**<br>1) ໂຄງປະກອບຂອງເລື່ອງເປັນແນວໃດ?<br>2) ການໃຊ້ສັບພາສາເຂົ້າໃນການປະພັນເປັນແນວໃດ?<br>3) ການອາດພາບ ແລະການພັນລະນາຂອງເລື່ອງເປັນແນວໃດ?<br>4) ວິທີໃຊ້ຮູບການສິລະປະໄມ້ງັດເປັນແນວໃດ? |
| **ຄວາມຮູ້ (Knowledge):**<br>- ໃຫ້ນັກຮຽນຮູ້ໄດ້ເຖິງວິທີການປະດິດແຕ່ງໜັງສືເລື່ອງ "ສິນໄຊ" | **ທັກສະ (Skills):**<br>- ອະທິບາຍໄດ້ເຖິງການໃຊ້ສິລະປະຕ່າງໆເຂົ້າໃນການປະດິດແຕ່ງເລື່ອງ. |
| **ຂັ້ນຕອນ 2 - ຫຼັກຖານປະເມີນ (Evidence)** | |
| **ໜ້າວຽກສິດສອນ (Tasks):**<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ | **ຫຼັກຖານອື່ນໆ (Other Evidence):**<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ |
| **ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)** | |
| - **ສື່ການສອນມີ:**<br>ປຶ້ມຕຳລາວິຊາວັນນະຄະດີລ້ານຊ້າງ, ປຶ້ມຄຳກອນສັງສິນໄຊ, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD.<br>- **ກິດຈະກຳການຮຽນ** | |

**ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງຕົວລະຄອນພາຍໃນເລື່ອງ “ສິນໄຊ” ໂດຍຫຍໍ້.
- **ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 4**

**ໜັງສືເລື່ອງ: “ສິນໄຊ”**

**4.5 ວິທີປະດິດແຕ່ງຂອງໜັງສືເລື່ອງ “ສິນໄຊ”**

**1) ໂຄງປະກອບຂອງໜັງສື** (10 ນາທີ)

**ກິດຈະກາ 1:**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ໂຄງປະກອບຂອງເລື່ອງເປັນແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (5 ນາທີ)

ໂຄງຮ່າງຂອງເລື່ອງແມ່ນອີງໃສ່ໂຄງຮ່າງຂອງບັນດາບົດຊາດົກຕ່າງໆ, ເລື່ອງທີ່ເວົ້າເຖິງການໃຊ້ຊາດຂອງພະພຸດທະເຈົ້າຕໍ່ຊາດກ່ອນ, ພະພຸດທະເຈົ້າມີສິ່ງທີ່ເພິ່ນທຳບໍ່ດີໄວ້, ມາຮອດຊາດໃໝ່ເພິ່ນກໍຕ້ອງໄດ້ກັບມາໃຊ້ຊາດ ຫຼື ໃຊ້ເວນຄືນ. ສະນັ້ນ, ເລື່ອງ ສີໄຊ ມີ ສິນໄຊ , ສັງທອງ, ສີໂຫ, ນາງຈັນທາ ແລະ ນາງຫຼ້າເປັນເຊື້ອກະສັດເປັນລູກເຕົ້າເລົ່າກໍຂອງພະອິນສົ່ງມາເກີດ (ໄຊ້ຊາດ). ດັ່ງນັ້ນ, ຈຶ່ງຖືກເນລະເທດເພື່ອເປັນການໃຊ້ກຳ.

- ເລື່ອງ ສິນໄຊ ປະກອບມີຕົວລະຄອນສອງສາຍຄື: ສາຍຕົວລະຄອນສິນທຳ ແລະ ອະທຳ.

ສະເພາະຕົວລະຄອນ ພະຍາກຸດສະລາດ ຈະຈັດຕົວລະຄອນໃດກໍໄດ້ ເພາະຕົວລະຄອນກຸດສະລາດມີຄວາມໝາຍສະແດງອອກຫຼາຍແງ່ທັງອະທຳ ແລະ ສິນທຳໄປພ້ອມໆກັນ. ສ່ວນຕົວລະຄອນໃຈກາງແມ່ນນາງ ສຸມຸນທາເພາະນາງ ສຸມຸນທາເປັນໃຈກາງຂອງເລື່ອງແຕ່ຕົ້ນຕະຫຼອດໄປ.

**2) ວິທີໃຊ້ສັບພາສາເຂົ້າໃນການປະພັນ** (15 ນາທີ)

**ກິດຈະກຳ 2:**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

1) ການໃຊ້ສັບພາສາເຂົ້າໃນການປະພັນເປັນແນວໃດ?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (10 ນາທີ)

ສັບ ແລະ ພາສາເປັນພື້ນຖານສຳຄັນຂອງບົດປະພັນວັນນະຄະດີ. ນັກປະພັນມາກຊິມ ກັອກກີ ໃຫ້ຄຳເຫັນວ່າ “ພາສາແມ່ນປັດໄຈທີ່ມີຂອງບົດປະພັນວັນນະຄະດີ” ບົດປະພັນນອກຈາກການສະແດງແລກປ່ຽນທາງດ້ານເນື້ອໃນແລ້ວຍັງສ້າງພື້ນຖານສັບພາສາອີກ. ສະນັ້ນ, ພາສາເປັນພາຫະນະທີ່ຂາດບໍ່ໄດ້ ເຊິ່ງກ່ອນອື່ນໝົດບົດປະພັນວັນນະຄະດີທີ່ເດັ່ນໆ, ນັກປະພັນໄດ້ເລືອກເຟັ້ນເອົາສັບພາສາທີ່ມີຮູບພາບ ແລະອຸດົມສົມບູນທາງດ້ານເນື້ອໃນເຂົ້າບົດ

, ເພື່ອໃຫ້ເນື້ອໃນແນວຄິດຂອງບົດສະແດງອອກຢ່າງຄົບຖ້ວນຕາມເຫດການທີ່ນັກແຕ່ງຢາກສ່ອງແສງ. ໃນບົດເລື່ອງສິນໄຊຕອນໜຶ່ງວ່າ:

ພໍເມື່ອພ່າງໆຮ້ອນ ສຸລິເຍດເຮືອງແສງ ພຸ້ນເຍີ
ອາທິດໂຄຄະນາເຖິງ ທ່ຽງອັນວຽນຂຶ້ນ
ຟັງຍິນລົມພັດຫຼຽງໄມ້ ໃບບາງເປື້ອງປິ່ນ
ມີທັງນົກໄສ່ຮ້ອງ ຊົມຕ້ອງຕື່ນລາງ (ສີລາ ວີຣະວົງ, 2512).

ການໃຊ້ພາສາຂອງນັກກະວີສຸດທີ່ມ່ວນອອນຊອນ ແລະ ມີຄຸນຄ່າຕິດພັນກັບຕົວລະຄອນເປັນຕົ້ນແມ່ນທຳມະຊາດ, ຄຳສັບມີຮູບພາບ, ຜູ້ອ່ານຈັບອົກຈັບໃຈ, ຕົວຢ່າງ ນັກແຕ່ງໄດ້ພັນລະນາການເຄື່ອນຍ້າຍຂອງດວງອາທິດເຊິ່ງຖືກກັບສະພາບຕົວຈິ່ງ, ຖືກກັບກາລະເທສະ ແລະ ສາມາດສຳນຶກເຫັນພາບທີ່ງົດງາມໂດຍຜ່ານພາສາຂອງນັກປະພັນ.

ຜໍ່ເຫັນ ສຸຣະພາພົ້ນ ພູຄຳຄົບໂລກ ພຸ້ນເຍີ
ວາເຍສຍູ້ ໄຫຼຝ້າຝຽດດອຍ (ສີລາ ວີຣະວົງ, 2512).

ນັກກະວີບໍ່ຢາກເວົ້າວ່າຕາເວັນຂຶ້ນແລ້ວເຮັດໃຫ້ຄວາມມືດສູນຫາຍໄປ ນັກແຕ່ງໄດ້ໃຊ້ສັບເພື່ອວາດພາບຄືນການເຄື່ອງຍ້າຍຂອງພະອາທິດດ້ວຍຄຳວ່າ "ພູຄຳຄົບໂລກ" ຫຼື "ວາໂຍຍູ້ ໄຫຼຝ້າຝຽດດອຍ". ເມື່ອແສງອາທິດສ່ອງແສງລົງມາທົ່ວສາລະທິດເຮັດໃຫ້ພິພົບປຽບເໝືອນວ່າ ປົກຫຸ້ມດ້ວຍນໍ້າຄຳ, ເມກໝອກຖືກຄັບໜີໃຫ້ຫາຍໄປດ້ວຍແສງແດດ ແລະ ລົມ. ນີ້ພຽງແຕ່ແມ່ນຈຸດນ້ອຍໆທີ່ຍົກມາພິສູດວ່າ ສັບພາສາເປັນການອະທິບາຍປະກົດການຢ່າງເດັ່ນຊັດ.

ຜ່ານການຍົກຕົວຢ່າງມານີ້ອາດສະຫຼຸບໄດ້ວ່າ: ສັບພາສາຢູ່ໃນບົດປະພັນໜຶ່ງໆທີ່ມ່ວນອອນຊອນເປັນຍ້ອນນັກກະວີດູດຈິດໃຈຜູ້ອ່ານຜູ້ຟັງທັງສ່ອງແສງສັງຄົມສະໄໝນັ້ນໄດ້ດີ, ເມື່ອເປັນແນວນັ້ນເລື່ອງ "ສິນໄຊ" ຈຶ່ງເປັນວັນນະກຳຄຳກອນຊັ້ນຍອດຂອງລາວສະບັບໜຶ່ງ.

**3) ການວາດພາບ ແລະການພັນລະນາ** (20 ນາທີ)

<u>**ກິດຈະກຳ 3:**</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ການວາດພາບ ແລະການພັນລະນາຂອງເລື່ອງເປັນແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (15 ນາທີ)

ການວາດພາບໃນໜັງສືເລື່ອງ " ສິນໄຊ" ແມ່ນໄດ້ສ່ອງແສງອອກຄືດັ່ງນີ້: ການວາດພາບຄົນນັ້ນແຕ່ງຂຶ້ນ, ການວາດພາບທຳມະຊາດ, ການວາດພາບທາງນອກ ແລະ ທາງໃນຂອງຕົວລະຄອນອີງຕາມພາວະຕົວຈິງຂອງກຳດຳລົງຊີວິດ.

**ກ. ການອາດພາບທີ່ຄົນສ້າງຂຶ້ນ**

ໃນໜັງສືເລື່ອງນັກກະວີໄດ້ອາດພາບທີ່ຕັ້ງຂອງຕົວເມືອງ, ຫໍພະສາດພະລາຊະວັງທີ່ສວຍງາມສະແດງເຖິງຄວາມສີວິໄລຮຸ່ງເຮືອງຂອງປະເທດຊາດບ້ານເມືອງຢູ່ໃນສະໄໝນັ້ນ, ພາບແຫ່ງການດຳລົງຊີວິດຂອງຄົນເຮົາທີ່ມີຄວາມສຸກກະເສີມສຳລານ, ພາບແຫ່ງການກໍ່ສ້າງຫໍໂຮງທີ່ສະຫງ່າລາສີເຊັ່ນວ່າ:

| | |
|---|---|
| ບັດນີ້ ຍັງມີນັກຄະເລດລ້າ | ຊົ້ນຊື່ເປັງຈານ |
| ນິຄົມຄົນ | ຄັ່ງເພັງພໍຕື້ |
| ຊຽງຫຼວງລົ້ນ | ລຸງລັງລ້ານຍ່ານ |
| ນ້ຳແຜ່ລ້ອມ | ລະວັງຕ້າຍຊື່ວຕາ |
| ຮຸ່ງຄ່ຳລົ້ນ | ຊາວເທດທຽວສະເພົາ |
| ອຸດົມໂດຍ | ດັ່ງດາວະດຶງຟ້າ (ສີລາ ວິຣະວົງ, 2512). |

ນອກຈາກພາບຕົວເມືອງເປັນຈານແລ້ວພາຍໃນຫໍໂຮງເປັນບ່ອນປະທັບຂອງເຈົ້າແຜ່ນດິນ (ພະຍາ) ແລະເຈົ້າຂຸນມຸນນາຍ ເຈົ້ານາງທັງຫຼາຍກໍປາກົດຂຶ້ນຢ່າງສວຍງາມ. ຫໍໂຮງດັ່ງກ່າວມຸງດ້ວຍທອງແດງ, ປະດັບດ້ວຍແກ້ວເຫຼື້ອມມີແສງປະກາຍ.

| | |
|---|---|
| ນັບແຕ່ ບຸຣີລ້ຳ | ນະຄອນຄົນໃດປຽບ |
| ໂຮງໃຫຍ່ກວ້າງ | ອໍລະທົ້ມຜ່ານຊຽງ |
| ປະດັບຊໍ່ຟ້າ | ມຸກມາດດາວຄຳ |
| ມຸງທອງແດງ | ຫຼໍ່ຕັນຕາງຟ້າ (ສີລາ ວິຣະວົງ, 2512). |

ອາດເວົ້າໄດ້ວ່າ ຄຳກອນຂ້າງເທິງນັກກະວີໄດ້ອາດພາບ ຫຼື ພັນລະນາຕົວເມືອງເປັງຈານທີ່ສວຍງາມ ແລະ ອຸດົມສົມບູນ, ບໍ່ອຶດຢາກຍາກແຄນຊາວເມືອງຢູທ່າງທຳມາຫາກິນບໍ່ຂາດເຂີນສິ່ງໃດສົມເປັນເມືອງເອກຂອງໂພທິສັດນີ້ກໍແມ່ນການສ່ອງແສງເຖິງສະພາບຂອງບ້ານເມືອງທີ່ຮຸ່ງເຮືອງໃນສັດຕະວັດນັ້ນ.

**ຂ. ການອາດພາບ-ພັນລະນາຕົວລະຄອນ**

ການພັນລະນາ ຫຼື ອາດພາບຕົວລະຄອນດ້ານຮູບນອກຂອງໜັງສືເລື່ອງ “ສິນໄຊ” ສະແດງອອກແບບລວມໆຄ້າຍຄືກັບເລື່ອງອື່ນໆທີ່ຖືກແຕ່ງຂຶ້ນໃນໄລຍະປະຫວັດສາດດຽວກັນເຊັ່ນ: ນັກແຕ່ງໄດ້ພັນລະນາຄວາມງາມຂອງ ນາງ ກິນນະລີແຫ່ງພູໄກລາດວ່າ:

| | |
|---|---|
| ໂສມຮາບເນື້ອ | ນິວລະພາກຂຽນຂານ |
| ເທິງທະລັງບິນ | ບໍ່ມີພໍພຽງ |
| ແຂນກົມກ້ຽງ | ມະນີເນືອງຄ້ອມກ່ອງ |
| ທຸກຢ່ານຟ້າ | ເຫຼືອງເຫຼື້ອມລັ່ງມາ (ສີລາ ວິຣະວົງ, 2512). |

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ສ່ວນການອາດພາບພາຍໃນຈິດໃຈຂອງຕົວລະຄອນນັກແຕ່ງໄດ້ພັນລະນາແມ່ນເດັ່ນຊັດ ແລະ ລະ ອຽດຈະແຈ້ງດີ, ນັກແຕ່ງເອົາຮູບພາບທຳມະຊາດ ແລະ ສັດສາວາສິ່ງເພື່ອເວົ້າເຖິງຄວາມໂສກເສົ້າຫງ່ອມເຫງົາຂອງຊາວເມືອງເປັງຈານຕໍ່ການຈາກໄປຂອງນາງ ສຸມຸນທາວ່າ:

| | |
|---|---|
| ທຸກທີ່ຖ້ອນ | ຄາເມໃນນອກ ກໍດີ |
| ຄັນວ່າ ຮູ້ຂ່າວຂ້ອຍ | ກໍ່ຫືວໄຫ້ທົ່ວແດນ |
| ແມ່ນວ່າ ສັບພະສິ່ງຊ້າງ | ມ້າມິ່ງໃນນະຄອນ ກໍດີ |
| ກໍບໍ່ກິນກຽງກັດ | ຢູ່ຊີງສະລອນພ້ອມ |
| ກັບທັງເນື້ອນົກລ້ຽງ | ປະຫິດຫຽນຫິງເຫບ ກໍດີ |
| ຂົວຄໍ່ຊຸ້ມ | ກະທາກີ້ກ່າງຍຸງ |
| ເຂົາແຂກແກ້ວ | ປຸນປາກສອນສຽງ ກໍດີ |
| ສັງກາຈິບ | ຈາບເນືອງໃນຮ້ານ |
| ກໍບໍ່ຮີຮ່ຳຮ້ອງ | ເຣສຽງສະງັດຢູ່ |
| ຝູງນີ້ເຈົ້າຂະໜ່ອມປ້ອງ | ປຸນລ້ຽງລຽບລະວັງ |
| ນັບແຕ່ເຈົ້າຈາກໄວ້ | ວາງເຫຍື່ອອາຫານ |
| ທັງມວນເມີນ | ຢູ່ຕອມຕົນເສົ້າ |
| ດີທໍ່ຊີງຊະລອນຄ້າງ | ຄອນງອບງວງລາດ |
| ກໍບໍ່ກິນເຫຍື່ອຫຍ້າ | ຄອຍຢັ້ງມຢູ່ເຫງົ້າ (ສີລາ ວິຣະວົງ, 2512). |

**ຄ. ການອາດພາບທຳມະຊາດ**

ພາບທຳມະຊາດແມ່ນຂອດໜຶ່ງທີ່ຈຳເປັນສຳລັບການປະພັນເລື່ອງ ແລະ ຍາມໃດກໍຕິດພັນກັບຕົວລະຄອນ. ໃນເລື່ອງ “ສັງສິນໄຊ” ນັກກະວີໄດ້ພະຍາຍາມເລືອກເຟັ້ນເອົາພາບທຳມະຊາດທີ່ສວຍງາມ ແລະ ມີຈິງປະກອບກັບເນື້ອໃນບົດກະວີຂອງຕົນຢ່າງມີຫົວຄິດປະດິດສ້າງເພື່ອໃຫ້ມີຄວາມດູດດື່ມ, ຈັບອົກຈັບໃຈ. ພາບທຳມະຊາດດັ່ງກ່າວປະກອບດ້ວຍແມ່ນ້ຳລຳເຊ, ຫ້ວຍຮ່ອງຄອງບຶງ, ພູຜາປ່າດົງ, ສັດສາວາສິ່ງ, ນົກໜູປູປານາໆຊະນິດ. ຈາກນັ້ນ, ນັກກະວີຍັງສ່ອງແສງ, ພັນລະນາເຖິງສິ່ງປົກຍ່ອຍຂອງທຳມະຊາດນຳອີກດ້ວຍເຊັ່ນ: ພາບຂອງນ້ຳໂຕນຕາດ, ສຽງນົກຮ້ອງໃນຍາມຄ່ຳ, ພາບໃນຍາມລາຕີ... ທີ່ເປັນທັດສະນີອັນສວຍງາມມາແຊກຊ້ອນໃນບົດກະວີຕື່ມອີກ.

| | |
|---|---|
| ພູມີດັ້ນ | ເດີນກາຍເຫວດາດ |
| ຟັງຍິນນ້ຳທັ່ງທໍ້ | ທານກ້ອນຄື່ນເຄງ |
| ພະກໍລັດເລັ່ງຂຶ້ນ | ເຂົາມາດເງິນຍວງ |
| ຫຼິງດູຄຳຫຼວງໄຫຼ | ຫຼັ່ງລິງໂຕນທ້າງ (ສີລາ ວິຣະວົງ, 2512). |

ນອກຈາກແມ່ນ້ຳລຳເຊແລ້ວ ນົກໜູປູປີກກໍເປັນພາບໜຶ່ງທີ່ສວຍງາມ, ນັກກະສີເອົາພາບຂອງນົກ, ໜູມາເປັນການບັນເລງຄວາມເບີກບານມ່ວນຊື່ນ ແລະ ຊຸກຍູ້ໃຫ້ຕົວລະຄອນເດັ່ນຊັດຂຶ້ນເຊັ່ນ: ຕອນສິນໄຊ, ແມ່ ແລະ ປ້າເດີນ

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ດຳລົງຊີວິດຢູ່ກັບສັດສາວາສິ່ງ. ເມື່ອທ້າວສິນໄຊຈະຈາກໄປນັ້ນກໍເໝືອນກັບວ່າທ້າວຕໍ່ສັດສາວາສິ່ງໄປ, ສະນັ້ນ, ຄວາມອາໄລອາວອນຂອງທ້າວຕໍ່ສັດທັງຫຼາຍກໍປາກົດອອກດ້ວຍຄວາມຮັກໄຄ່ໄມຕີວ່າ:

| | |
|---|---|
| ບັດນີ້ ກູຈັກພາກເພື່ອນພ້ອມ | ເມືອສູ່ເປັງຈານ ກ່ອນແລ້ວ |
| ທັງປວງສູ | ຢູ່ຍືນຍາເສົ້າ |
| ຢູ່ດີເຍີ ມະຍູລາເຄົ້າ | ປະຫິດຫຽນຫົງເຫບ |
| ຕະຫຼູບໄກ່ກຸ້ມ | ການ້ຳເຈົ້າຈອງ |
| ຍາງຂາວເຂັ້ມ | ຊຽງຊຸມຊາຍກວາກ |
| ເຕັນຕ່ອງແຕ້ | ຄໍກ້ຽວກ່ານແຊງ |
| ຊຸມໜຶ່ງ ແກງກົກອ້ຽງ | ອຳພາໂພນໂດກ |
| ເປົ້າປ່າວໄມ້ | ລໍລິ້ວບ່າງບິນ |
| ສັບໂປປ້ອງ | ສັງກາກີ້ກ່າງ |
| ສູຫາກແຮງຮ່າຍໄມ້ | ຄອຍເລັມລູກໄຮ |
| ຢ່າໄດ້ ວິວາດຮ້າຍ | ເຫງບິບບຽນກັນ |
| ຄຳກູສອນ | ໃສ່ໃຈຈຳໄວ້ (ສີລາ ວີຣະວົງ, 2512) |

ນັກກະວີໄດ້ພັນລະນາສັດຈຳພວກກາລະວິກ ແລະພວກເນື້ອເຊິ່ງຖືວ່າເປັນກຳລັງປ້ອງກັນໃຫ້ສິນໄຊ ເມື່ອສິນໄຊຈາກໄປກໍສະແດງຄວາມຄິດຮອດຄິດເຖິງເໝືອນຝູງສັດອື່ນໆ ແລະ ສິນໄຊກໍ່ໄດ້ສັ່ງສອນວ່າ:

| | |
|---|---|
| ແມ່ນວ່າ ສັບພະສິ່ງຊ້າງ | ຄະນາທອກທວຍທອງ ກໍດີ |
| ກວາງຊາຍຟານ | ລະມັ່ງໝູເໝືອຍເໜັ້ນ |
| ມອມເຍືອງໃກ້ | ໝູຊິງກະແຕຕ່າຍ |
| ກະເລັນຮອກຈ້ອນ | ເຫງັນອຶ້ມຫ່ານຫອນ |
| ໝີເໝືອຍເໜັ້ນ | ກະທາງປອມແລນລິ່ນ ກໍດີ |
| ຈີ່ໂກະຍາບແຍ້ | ຄະນາກ້ຽມກ່າງຕອງ |
| ເຈ້ຍຈອງເຄົ້າ | ຄາງຄາວບີ້ບ່າງ |
| ຝູງໝູ່ເຄີຍໄຕ່ເຕັ້ນ | ໂຕນຄ້າງຄ່າງຊະນີ |
| ສັບພະໂຄ່ງຂ້ຽວ | ອຳອ່ອຍລາຍເຫຼືອງ ກໍດີ |
| ສູຢ່າກວນແສນສັດ | ໝູ່ຮຸນແຮງນ້ອຍ |
| ແມ່ນວ່າ ແຫຼວຫຼວງເຄົ້າ | ພານໂຕນຕົວພີ່ກໍດີ |
| ຮຸ້ງເຮ່ວຜ້າຍ | ພານບີ້ກະອອກຫຼວງ |
| ແນວສູຮ້າຍ | ຈັງໄຮແພ້ເພື່ອນ |
| ຢ່າໄດ້ຊິງຊຸດຫຍໍ້າ | ຫຍຸມເຂົ້າໂຄບເຕັງ ເພື່ອນເນີ (ສີລາ ວີຣະວົງ, 2512). |

ນອກຈາກນັ້ນ ນັກກະວີໄດ້ພັນລະນາພຶກສາສາດໄມ້ຕາມລະດູການໃນສຸວັນນະພູມຂອງລາວໃນສະ ໄໝບູຮານໄວ້ເປັນສິ່ງປະດັບເອ້ຍ້ອງ ແລະ ສິ່ງກິ່ນຫອມຫວນຊວນໃຈຕໍ່ຜູ້ອ່ານ, ຜູ້ຟັງໂດຍສະເພາະແມ່ນຕອນແຫ່ສິນໄຊກັບໄປເມືອງເປັງຈານ:

| | |
|---|---|
| ຄອຍເຫັນ ດອນແດນກໍ້າ | ເປັງຈານຈອມເມກ ພຸ້ນເຢີ |
| ໂຍເຫດທ້າວ | ທັງຄ້າຍຊື່ນບານ |
| ເດຍລະດາດໄມ້ | ເຮືອງດອກລະດູໜາວ ພຸ້ນເຢີ |
| ລະດູເດືອນສາມ | ລ່ວງລີ້ງດິນຍ້າຍ |
| ຣິມໆຂ້າ | ສະຫງວນຊິມຊ້ອນເກດ |
| ຟ້າສະຫວ່າງເຕົ້າ | ລະດູແລ້ງລ່ວງລົມ (ສີລາ ວີຣະວົງ, 2512). |

ການພັນລະນາທຳມະຊາດປາກົດອອກໃນບົດກະວີຢ່າງອຸດົມສົມບູນ, ຖືກຕາມລະດູການທັງເປັນການສ່ອງແສງໃຫ້ເຮົາເຫັນເຖິງຄວາມສວຍສົດງົດງາມທາງດ້ານຊັບພະຍາກອນທຳມະຊາດ, ສັດສາວາສິ່ງທີ່ເປັນຮູບປະທຳ.

**4) ວິທີໃຊ້ຮູບການສິລະປະໄມ້ງັດ** (15 ນາທີ)

**<u>ກິດຈະກຳ 4:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ວິທີໃຊ້ຮູບການສິລະປະໄມ້ງັດເປັນແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (10 ນາທີ)

ການໃຊ້ສິລະປະແບບໄມ້ງັດເຂົ້າໃນການປະດິດແຕ່ງບົດປະພັນວັນນະຄະດີ, ແມ່ນວິທີການແຕ່ງໜຶ່ງທີ່ນັກແຕ່ງສະໄໝບູຮານໝູນໃຊ້. ວິທີນີ້ແມ່ນຍົກເອົາເຫດການໜຶ່ງທີ່ເດັ່ນໆຂຶ້ນມາກ່ອນ, ແຕ່ເຫດການໜຶ່ງທີ່ເກີດມາຕາມຫຼັງພັດເດັ່ນກວ່າເຫດການທຳອິດອີກເຊັ່ນຢູ່ໃນບົ້ນ "ອະນຸຍຸດທະກຳບົ້ນ"

| | |
|---|---|
| ເມື່ອນັ້ນຣິມໆຂ້າ | ຊຸມມານໂດຍອາດ |
| ບາງພ່ອງທຳເດດຟື້ງ | ໄຟໄໝ້ເປັ້ງແປວ |
| ບາງພ່ອງນິລະມິດຕັ້ງ | ຕີນສູງສາມໂຍດ |
| ອົມໝູ່ຊ້າງ | ຕາງໜ້ຽງຊູສາມ |
| ບາງພ່ອງມາຍມີກົ້ງ | ກາງຫາວມືວມິດ |
| ສຽງໂຫ່ຮອງ | ຄືຟ້າລັ່ນເນືອງ |
| ບາງພ່ອງຈັບນາກນ້າວ | ສວຍສອດສັ່ງວານ ກໍມີ |
| ບາງພ່ອງທອຍງູທັດ | ເພີດເພີນຄໍໄວ້ |
| ບາງພ່ອງເປັນຫົວຊ້າງ | ຫົວງົວເມີຍລະມັ່ງ ກໍມີ |
| ຕົວຮູບມ້າ | ທະຍານເຕັ້ນລ່ວງໄປ (ສີລາ ວີຣະວົງ, 2512). |

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ການສະແດງແຜງລິດກຳລັງຜິນຂອງຍັກເປັນການນາບຂູ່ ແລະ ປາບກຳລັງຂວັນຂອງສິນໄຊ, ແຕ່ຍ້ອນມີຄວາມສາມັກຄີສູ້ຣົບລະຫວ່າງ ສິນໄຊ, ສັງທອງ ແລະສີໂຫ ທ້າວທັງສາມຈຶ່ງສາມາດໄດ້ໄຊຊະນະກຳລັງຫຼວງຂອງຍັກມານຕ່າງໆ.

| | |
|---|---|
| ບາຄານທ້າວ | ຖອນຕ່າວເປື້ອງແກວ່ງ |
| ແສງສິ່ງຕ້ອງ | ມານມ້າງໂຄບຄືນ |
| ດາບຫຼັງເຫົ້າ | ແທງທ່າວມືອກະຫາຍ |
| ເຄງໆມານມືອກະຈັດ | ຈຸ່ມຕາຍເຕັງມ້ອຍ (ສີລາ ວິຣະວົງ, 2512). |

ກຳລັງຂອງຍັກກຸມພັນມີຄວາມເກັ່ງກ້າສາມາດທາງດ້ານການສະແດງແຜງລິດ, ແຕ່ສິນໄຊສາມາດເອົາຊະນະພວກມັນໄດ້. ດັ່ງນັ້ນ, ຈຶ່ງສາມາດເວົ້າໄດ້ວ່າ ສິນໄຊເກັ່ງກວ່າຍັກກຸມພັນ ແລະ ເປັນການຢັ້ງຢືນວ່ານັກປະພັນໄດ້ໃຊ້ສິລະປະແບບໄມ້ງັດເຂົ້າໃນການປະດິດແຕ່ງຢ່າງຈະແຈ້ງ.

ຜ່ານຮູບການສິລະປະການແຕ່ງ ແລະເນື້ອໃນທີ່ຍົກມາຂ້າງເທິງເຫັນໄດ້ວ່າໜັງສືເລື່ອງ “ສັງສິນໄຊ” ເປັນໜັງສືສະບັບໜຶ່ງທີ່ເດັ່ນໃນບັນດາເລື່ອງທັງຫຼາຍທີ່ແຕ່ງຂຶ້ນໃນສະໄໝອານາຈັກລາວລ້ານຊ້າງຮຸ່ງເຮືອງ. ບົດເລື່ອງໄດ້ຍ້ອງຍໍສັນລະເສີນຊົນຊັ້ນສັກດີນາລາວມີຄຸນປະໂຫຍດຕໍ່ຊາດໂດຍຜ່ານຮູບການເຄື່ອນໄຫວເພື່ອສ້າງຄຸນງາມຄວາມດີຂອງຕົວລະຄອນຕ່າງໆເຊັ່ນ: ຕົວລະຄອນ ນາງຈັນທາ ແລະ ນາງຫຼ້າເປັນຕົວແທນໃຫ້ແກ່ແມ່ທີ່ດີໃນການລ້ຽງລູກໃນພາວະການທີ່ຄັບຂັນຈິນຕາແຈ; ເລື່ອງຍັງເປັນການຍ້ອງຍໍໂດຍທາງກົງທາງອ້ອມໃນຄວາມຮັກອັນບໍລິສຸດຕໍ່ລູກຕໍ່ຜົວຂອງນາງ ສຸມຸນທາ, ເຖິງວ່າກຸມພັນຈະເປັນເຊື້ອຊາດຍັກຕ່າງຊາດຕ່າງພວກກໍຕາມ, ແຕ່ນາງສະແດງຄວາມຮັກຕໍ່ຜົວຢ່າງບໍ່ເວັ້ນວາງຕະຫຼອດຕົ້ນຕະຫຼອດປາຍ.

ບົດວັນນະກຳເລື່ອງສິນໄຊເປັນເລື່ອງທີ່ໄດ້ສ່ອງແສງເຖິງເຫດການອັນເປັນຈິງຂອງສັງຄົມໃນຄາວນັ້ນເພາະມັນໄດ້ສ່ອງແສງໃຫ້ເຫັນຄວາມບໍ່ເປັນທຳ ແລະ ຄວາມໂງ່ຈ້າບອດໃບ້ຂອງຊົນຊັ້ນສັກດີນາປົກຄອງ, ທັງໄດ້ສ່ອງແສງໃຫ້ຮູ້ວ່າກຳລັງອະທຳໃນສັງຄົມຜັກດັນໃຫ້ສັງຄົມວຸ່ນວາຍສັບສົນ, ເກີດການຂັດແຍ້ງແຂ່ງດີບໍ່ມີຄວາມຊື່ສັດຕໍ່ກັນ, ນອກຈາກນັ້ນ, ຍັງສ່ອງແສງໃຫ້ເຫັນກຳລັງເປັນທຳໃນສັງຄົມແມ່ນຍອດປາຖະໜາຂອງມວນຊົນເປັນກຳລັງທີ່ຕ້ານຢັນກັບກຳລັງອະທຳ, ສິນທຳຕ້ອງຊະນະອະທຳຢ່າງຂາດຕົວສົມກັບຊື່ຂອງບົດປະພັນທີ່ວ່າ “ສິນໄຊ”.

ເຖິງວ່າວັນນະກຳເລື່ອງສິນໄຊມີເນື້ອໃນອັນດີງາມ ແລະ ອັນບົກຜ່ອງກໍຕາມ ແຕ່ວັນນະກຳເລື່ອງນີ້ກໍໄດ້ຮັບຄວາມນິຍົມຈາກມະຫາຊົນວ່າເປັນວັນນະກຳຊັ້ນສູດຍອດຂອງຊາດ, ເພາະມີເນື້ອໃນສັດຈະຢ່າງເລິກເຊິ່ງເພີນຈິດຢ່າງໜ້າອັດສະຈັນ ແລະແທດເໝາະກັບອຸດົມການກໍຄືຈິນຕະນາການຂອງປະຊາຊົນລາວໃນສະໄໝນັ້ນ, ນອກນີ້ຍັງມີສິລະປະອັນດີເດັ່ນໃນລີລາການແຕ່ງກໍຄືໃນດ້ານການນຳໃຊ້ສັບທີ່ມີຮູບພາບດີ, ມີຄວາມໄພເລາະມ່ວນຕະຫຼອດເລື່ອງ, ພ້ອມກັນນັ້ນຍັງໃຫ້ໃຫ້ຄະຕິບົດຮຽນທີ່ຜູ້ອ່ານອາດເລືອກເຟັ້ນເອົາເພື່ອໝູນໃຊ້ໃຫ້ເກີດປະໂຫຍດແກ່ການດຳລົງຊີວິດໄດ້ດີອີກດ້ວຍ (ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ, 2019).

## III. ຂັ້ນສະຫຼຸບ

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**

  - ວິທີປະດິດແຕ່ງໜັງສືເລື່ອງ “ສິນໄຊ”

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

- **ຂັ້ນຕັກເຕືອນ**
  - ຄູແນະນຳນັກຮຽນອ່ານບົດຮຽນໃໝ່
  - ສຶກສາແນວຄິດຂອງຜູ້ຮຽນ
  - ມອບວຽກບ້ານ

**ເອກະສານອ້າງອີງ**

ສົມທະເພີຍ ສີວົງສັກ ແລະ ອຳໄພ ສອນທະລາ. (2019). **ວັນນະຄະດີລ້ານຊ້າງ**. ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ.
ສີລາ ວິຣະວົງ (ພສ. 2512) **ສັງສິນໄຊ**. ວັນນະຄະດີຄຳກອນຊັ້ນຍອດຂອງລາວ. ກະຊວງທຳມະການ.

ຄູສອນປະຈຳວິຊາ

ປທ.ສົມທະເພີຍ ສີວົງສັກ